# ບົດກ່າວປິດ

## ທ່ານ ນ. ສີສົມບູນ ອຸນາວົງ ຫົວໜ້າກົມຮ່ວມມືສາກົນ,
## ກະຊວງແຜນການ ແລະ ການລົງທຶນ
## ກອງປະຊຸມ ປະທານ ແລະປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ

*ໃນວັນທີ 3 ຕຸລາ 2024, ທີ່ ໂຮງແຮມສຸພັດຕາ, ນະຄອນຫຼວງວຽງຈັນ*

---

**ຮຽນ: - ທ່ານ ບັກໂຄເດັຍ ເບີຄານ໋ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວທີ່ນັບຖື;**

- **ບັນດາທ່ານຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ, ຫົວໜ້າກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ທີ່ນັບຖື;**
- **ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາ ທີ່ນັບຖື;**

**ບັນດາທ່ານແຂກທີ່ມີກຽດ ທ່ານ ຍິງ ແລະທ່ານຊາຍ ທີ່ຮັກແພງ.**

ມາຮອດນີ້, ກອງປະຊຸມ ຂອງພວກເຮົາ ກໍ່ໃກ້ຈະປິດລົງແລ້ວ, ຂ້າພະເຈົ້າຕາງໜ້າ ໃຫ້ຄະນະປະທານ ອີກເທື່ອໜຶ່ງ ສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງບັນດາທ່ານແຂກທີ່ມີກຽດ ທີ່ໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນ ຢ່າງກົງໄປກົງມາ, ມີເນື້ອໃນອັນຄົບຖ້ວນ ແລະມີຄວາມສຳຄັນ ໃນຄັ້ງນີ້, ເຊິ່ງບັນດາຄຳຄິດເຫັນຂອງທ່ານນັ້ນ ທາງກອງເລຂາຈະສັງລວມນຳໄປຄົ້ນຄວ້າພິຈະລະນາ ປັບປຸງທາງດ້ານເນື້ອໃນ ກອງປະຊຸມໂຕະມົນ ປະຈ□າປີ 2024 ນີ້.

ປັດຈຸບັນ, ການກະກຽມ ກອງປະຊຸມໂຕະມົນ ປະຈຳປີ 2024 ໄດ້ເດີນທາງມາຮອດໂຄ້ງສຸດທ້າຍແລ້ວ, ຂ້າພະເຈົ້າ ເຫັນໄດ້ການເສີມຂະຫຍາຍກົນໄກການເຮັດວຽກຮ່ວມກັນຢ່າງມີປະສິດທິຜົນສູງລະຫວ່າງ ລັດຖະບານ, ຄູ່ຮ່ວມພັດທະນາ ແລະພາກສ່ວນກ່ຽວຂ້ອງ ໂດຍສະເພາະບັນດາກອງເລຂາ 10 ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ (SWGs) ແມ່ນມີບົດບາດສຳຄັນ ໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານຂະບວນການໂຕະມົນ ໂດຍຜ່ານການຮັບຟັງລາຍງານການຈັດຕັ້ງປະຕິບັດໜ້າວຽກຂອງບັນດາ 10 ໜ່ວຍງານຂະແໜງການ ໃນມື້ນີ້, ເຊິ່ງສາມາດເຫັນໄດ້ສິ່ງພົ້ນເດັ່ນ ແລະຜົນສຳເລັດຢ່າງຈົບງາມ ໂດຍໄດ້ສ່ອງແສງຜ່ານການຈັດຕັ້ງປະຕິ ບັດກິດຈະກຳຕົວຈິງ ເຮັດໃຫ້ການກະກຽມທາງດ້ານເນື້ອໃນຂອງ ກອງປະຊຸມໂຕະມົນ ປະຈຳປີ 2024 ມີຄວາມຄືບໜ້າ ແລະມີຄວາມພ້ອມຢ່າງສົມບູນ.

**ບັນດາທ່ານ ແຂກທີ່ມີກຽດ**

ຄຽງຄູ່ກັບຄຳຄິດເຫັນອັນຫຼາກຫຼາຍ ແລະມີຄຸນຄ່າ ຂອງບັນດາທ່ານ ຂ້າພະເຈົ້າ ຂໍເນັ້ນໜັກ ບາງຈຸດ ເພີ່ມຕື່ມດັ່ງນີ້:

- ສະເໜີໃຫ້ ບັນດາກອງເລຂາໜ່ວຍງານຂະແໜງການ ສືບຕໍ່ຈັດກອງປະຊຸມໜ່ວຍງານຂະແໜງການຂອງຕົນເອງ, ພ້ອມດຽວກັນນີ້ ສະເໜີໃຫ້ສົ່ງແຜນວຽກປະຈຳປີ (AWP) ກໍ່ຄືບົດລາຍງານຄວາມຄືບໜ້າຂອງ ໜ່ວຍງານຂະແໜງການຕົນ ໃຫ້ກະຊວງແຜນການ ແລະການລົງທຶນ (ກົມຮ່ວມມືສາກົນ ໃນນາມເປັນກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ) ພາຍໃນເດືອນຕຸລານີ້, ເພື່ອຈະໄດ້ສ້າງເປັນບົດລາຍງານ ແລະປະກອບເຂົ້າໃນເນື້ອໃນຮັບໃຊ້ ກອງປະຊຸມໂຕະມົນ ປະຈຳປີ 2023;
- ການຈັດຕັ້ງປະຕິບັດກິດຈະກຳຂອງໜ່ວຍງານຂະແໜງການ ກໍ່ຍັງເຫັນວ່າ ມີສິ່ງທ້າທາຍຫຼາຍດ້ານ ສະເໜີໃຫ້ບັນດາໜ່ວຍງານຂະແໜງການ ເອົາໃຈໃສ່ຈັດຕັ້ງປະຕິບັດ ບັນດາຍຸດທະສາດ ແລະແຜນວຽກບູລິມະສິດ ທີ່ຕິດພັນກັບຂະແໜງການຕົນ ໂດຍສະເພາະ ສິ່ງທີ່ໄດ້ປຶກສາຫາລືໃນກອງປະຊຸມໂຕະມົນ ປີ 2024 ທີ່ຜ່ານມາໃຫ້ສຳເລັດ;
- ຍົກລະດັບຄວາມສຳຄັນໃນການກຽມຄວາມພ້ອມຮັບມືກັບໄພທາງທຳມະຊາດ, ການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ, ຄຳນຶງເຖິງຜົນກະທົບທາງສັງຄົມ ແລະສິ່ງແວດລ້ອມ ໂດຍການເຊື່ອມສານເຂົ້າໃນແຜນ 10;
- ເພີ້ມທະວີຄວາມເຂັ້ມແຂງໃຫ້ແກ່ວຽກງານ ການກຽມຄວາມພ້ອມຮັບມືກັບ ໄພພິບັດ ເປັນຕົ້ນ: ສົ່ງເສີມການມີສ່ວນຮ່ວມ ແລະການສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານປ້ອງກັນ ແລະຄວບຄຸມໄພພິບັດນັບແຕ່ສູນກາງ ລົງຮອດທ້ອງຖິ່ນ ແລະຊຸມຊົນທີ່ມີຄວາມສ່ຽງສູງ, ປັບປຸງລະບົບການເຕືອນໄພລ່ວງໜ້າ, ສຶກສາຄວາມສ່ຽງ ແລະສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ;
- ຍົກລະດັບການວາງແຜນໃນລະດັບຊາດ ແລະທ້ອງຖິນໃນຂະແໜງກະກສິກຳ ເພື່ອຫຼຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ ໃນຂະແໜງກະສິກຳ ແລະປ່າໄມ້ ຜ່ານຄວາມຫຼາກລາຍໃນການປູກພືດ ແລະການກະສິກຳ ທີ່ທົນທານ;
- ປະສານສົມທົບກັບ ຄູ່ຮ່ວມພັດທະນາ, ພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະພາກສ່ວນກ່ຽວຂ້ອງອື່ນໆ ໃນວຽກງານການຟື້ນຟູຫຼັງໄພພິບັດ ໂດຍກຳນົດເປັນແຜນວຽກບູລິມະສິດ ແລະຊຸກຍູ້ໃຫ້ມີການປະກອບສ່ວນດ້ານທຶນຮອນ, ວັດຖຸອຸປະກອນ ແລະດ້ານວິຊາການ;
- ສະເໜີໃຫ້ ໜ່ວຍງານຂະແໜງການ ທີ່ມີຄວາມພ້ອມ ໃຫ້ຈັດກອງປະຊຸມປຶກສາຫາລືກ່ອນກອງປະຊຸມໂຕະມົນ **(Pre-Consultation Meeting for 2024 RTIM preparation)** ເພື່ອຮັບປະກັນໃຫ້ມີເວລາຫຼາຍຂຶ້ນໃນການປຶກສາຫາລືສົນທະນາ ໂດຍສະເພາະການຈັດກອງປະຊຸມປຶກສາຫາລື ກ່ຽວກັບ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ **X**, ການປຶກສາຫາລື ກ່ຽວກັບມາດຕະການເພື່ອປ້ອງກັນ, ຕອບໂຕ້**,** ຮັບມື ແລະຟື້ນຟູ ກ່ອນ ແລະຫຼັງ ໄພພິພັດ ແລະອື່ນໆ.

ຂ້າພະເຈົ້າ ໃນນາມຕາງໜ້າກະຊວງແຜນການ ແລະການລົງທຶນ ຂໍຕີລາຄາສູງ ແລະ ຊົມເຊີຍຕໍ່ກອງປະຊຸມຂອງພວກເຮົາໃນມື້ນີ້ ທີ່ໄດ້ດຳເນີນໄປດ້ວຍບັນຍາກາດອັນຟົດພື້ນ, ມີການແລກປ່ຽນຄຳຄິດຄຳເຫັນດ້ວຍຄວາມຮັບຜິດຊອບສູງ ແລະ ເຕັມໄປດ້ວຍເນື້ອໃນອັນຄົບຖ້ວນ ແລະ ປະສົບຜົນສຳເລັດຢ່າງຈົບງາມ.

ອີກເທື່ອໜຶ່ງ, ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງ **ທ່ານ ບັກໂຄເດັຍ ເບີຄະນ໋ອຟ**, **ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ປະທານຮ່ວມ** ທີ່ໄດ້ສະຫລະເວລາອັນມີຄຸນຄ່າຂອງ ທ່ານ ເຂົ້າຮ່ວມໃນກອງປະຊຸມ ທີ່ສຳຄັນໃນຄັ້ງນີ້.

ສະແດງຄວາມຂອບໃຈ ມາຍັງບັນດາທ່ານ **ແຂກທີ່ມີກຽດ ທ່ານຍິງ ແລະທ່ານຊາຍ** ໂດຍສະເພາະ ກອງເລຂາ **10** ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ທີ່ໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ຢ່າງພ້ອມພຽງ.

ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໄຊອັນປະເສີດໃຫ້ ບັນດາທ່ານຜູ້ແທນເຂົ້າຮ່ວມກອງປະຊຸມທັງໝົດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມເບີກບານມ່ວນຊື່ນ ແລະ ປະສົບຜົນສຳເລັດອັນຫຍິ່ງໃຫຍ່ ໃນໜ້າທີ່ວຽກງານຂອງບັນດາທ່ານ.

ນະໂອກາດນີ້ ຂ້າພະເຈົ້າຂໍກ່າວປິດ ກອງປະຊຸມນັບແຕ່ເວລານີ້ເປັນຕົ້ນໄປ.

**ຂໍຂອບໃຈ**